# ປັດໃຈທີ່ສົ່ງຜົນສະທ້ອນ ໃຫ້ກຸ່ມຜູ້ຜະລິດ ປະສົບຜົນສໍາເລັດ ແລະ ບັນຫາຕ່າງໆ

ເມືອງຊໍາເໜືອ ແຂວງຫົວພັນ

Dr. Jean-Christophe Castella

ພື້ນທີ່ການສຶກສາ



## ພາກສະເໜີ

- ໃນບົດລາຍງານສະບັບນີ້ ແມ່ນໄດ້ເກັບກຳຂໍ້ມູນ ໃນເຂດບ້ານເປົ້າໝາຍ ຂອງໂຄງການຢຸດຕິການຖາງປ່າເຮັດໄຮ່ ແລະ ລົບລ້າງການປູກຝິ່ນ ທີ່ໄດ້ຮັບເງິນກູ້ຈາກທະນາຄານພັດທະນາອາຊີ ແລະ ອົງການສະຫະປະຊາຊາດຄວບຄຸມ ແລະ ປາບປາມຢາເສບຕິດ ທີ່ໄດ້ຈັດຕັ້ງປະຕິບັດງານມາຕັ້ງແຕ່ປີ 1999-2006.
- ແຂວງຫົວພັນ ເປັນແຂວງໜຶ່ງທີ່ທຸກຍາກໃນລາວ. ຊຶ່ງທາງໂຄງການໄດ້ສະໜັບສະໜູນໃຫ້ປະຊາຊົນຈັດຕັ້ງກຸ່ມ ໂດຍການສ້າງຕັ້ງກອງທຶນໝູນວຽນພາຍໃນບ້ານຂຶ້ນ ເພື່ອສ້າງລາຍຮັບໃຫ້ແກ່ຄອບຄົວ.

## ຈຸດປະສົງ

- ເພື່ອສຶກສາຈາກປະສົບການ ແລະ ບົດຮຽນທີ່ຜ່ານມາທີ່ສາມາດບັນລຸຜົນ ແລະ ຂໍ້ຜິດພາດທີ່ເກີດຂຶ້ນໃນອາດີດ ເພື່ອນຳມາພັດທະນາກຸ່ມຊາວກະສິກອນ ໃຫ້ກ້າວໄປເຖິງສະຫະກອນຮູບແບບໃໝ່.
- 
- ເພື່ອເຂົ້າໃຈເຖິງເຄືອຄ່າຍທາງສັງຄົມ ທີ່ເຮັດໃຫ້ການຈັດຕັ້ງກຸ່ມ ສາມາດດຳລົງຄົງຕົວຢູ່ໃດ .

# ວິທີການ

ການເກັບກຳຂໍ້ມູນໃນຄັ້ງນີ້ ແມ່ນໄດ້ດຳເນີນຢູ່ເປັນເວລາ 6 ເດືອນ ເລີ່ມຈາກ ເດືອນພະຈິກ 2007 ເຖິງເດືອນເມສາ 2008.

ທົບທວນເອກະສານຕ່າງໆທີ່ກ່ຽວຂ້ອງ

ປຶກສາຫາລື ແລະ ສຳພາດ ກັບພາກສ່ວນທີ່ກ່ຽວຂ້ອງ ພາຍໃນອົງການທີ່ແຕກຕ່າງກັນ.

ລົງສຳຫຼວດ ແລະ ເກັບກຳຂໍ້ມູນຕົວຈິງ ຈາກສະມາຊິກ ແລະ ຫົວໜ້າກຸ່ມ.

– ການເກັບກຳຂໍ້ມູນ ໂດຍການສຳພາດ, ການສົນທະນາເປັນກຸ່ມ, ການລົງເກັບກຳຂໍ້ ມູນຕົວຈິງໃນລະດັບຄົວເຮືອນ ໂດຍການໃຊ້ແບບຟອມສອບຖາມ ຊຶ່ງເປັນໂອກາດທີ ດີ ທີ່ໄດ້ທຳຄວາມເຂົ້າໃຈເຖິງສະພາບຄົບຄົວຫຼາຍຂຶ້ນ.

- ລວບລວມຂໍ້ມູນພື້ນຖານ ແລະ ວິເຄາະຂໍ້ມູນ.

# ການຄັດເລືອກທີ່ຕັ້ງໃນການສຶກສາ

ຂອບເຂດການສຶກສາຄົ້ນຄວ້າ
ພາຍໃຕ້ບ້ານເປົ້າໝາຍຂອງ
ໂຄງການຢຸດຕິການຖາງປ່າເຮັດໄຮ່
ແລະລຶບລ້າງການປູກຝິ່ນ.




ມາດຖານໃນການຄັດເລືອກບ້ານ:
-ຄັດເລືອກເອົາກຸ່ມທີ່ປະສົບຜົນສຳເລດ
- ການເຂົ້າເຖິງບ້ານ
- ບ້ານທີ່ໄດ້ຮັບຄວາມຮູ້ຈາກການຝຶກອົບຮົມ
-ແລະ ຈຳກັດຄວາມຮູ້
- ຊົນເຜົ່າ

1. **ບ້ານຣາມໄຕ້,** ຊົນເຜົ່າລາວລຸ່ມ. ເປັນບ້ານໜຶ່ງທີ່ສາມາດດຳເນີນງານໄດ້ດີ ພາຍໃຕ້ກອງທຶນໝູນວຽນ ທີ່ປ່ອຍສິນເຊື່ອໃຫ້ກຸ່ມຕຳຫູກ ແລະ ສາມາດສືບຕໍ່ດຳເນີນງານພາຍຫຼັງທີ່ສິ້ນສຸດໂຄງການ.
2. **ບ້ານຫ້ວຍຄີງ,** ຊົນເຜົ່າຄະມຸ. ເປັນບ້ານໜຶ່ງ ທີ່ພົບບັນຫາໃນການດຳເນີນງານ ໂດຍສະເພາະແມ່ນກຸ່ມລ້ຽງແບ້.
3. **ບ້ານນາຫ້ວຍ,** ຊົນເຜົ່າລາວລຸ່ມ. ເປັນບ້ານທີ່ມີຫຼາຍກຸ່ມກິດຈະກຳ ແຕ່ຂາດການປະສານງານ ລະຫວ່າງຫົວໜ້າກຸ່ມ ແລະ ສະມາຊິກ (ດຳເນີນກິດຈະກຳພໍ່ໃຜພໍ່ລາວ).



4. **ບ້ານໂພນໄຊ,** ເປັນບ້ານໜຶ່ງທີ່ມີຄວາມຫຼາກຫຼາຍທາງດ້ານຊົນເຜົ່າ ທີ່ອາໃສຢູ່ຮ່ວມກັນ. ດັ່ງນັ້ນ, ຈຶ່ງເຮັດໃຫ້ການດຳເນີນງານພາຍໃນກຸ່ມ ພົບບັນຫາຫຍຸ້ງຍາກ ໃນການສື່ສານ. ນອກຈາກນີ້, ບັນຫາການແຈກຢາຍສິນເຊື່ອທີ່ບໍ່ເປັນທຳ.
5. **ບ້ານກໍໄຮ່,** ຊົນເຜົ່າລາວສູງ. ເປັນບ້ານທີ່ໄດ້ຮັບຜົນກະທົບຈາກໄຟໃໝ້ບ້ານ ເຮັດໃຫ້ການດຳເນີນງານພາຍໃນກຸ່ມຊ້າລົງ ແລະ ຕ້ອງຢຸດສະຫງັກລົງ. ພ້ອມດຽວກັນນັ້ນ, ກໍ່ມີບັນຫາການຂັດແຍ່ງກັນລະຫວ່າງ ສະມາຊິກ ແລະ ຫົວໜ້າກຸ່ມ.



## ເປັນຫັຍງການຈັດຕັ້ງກຸ່ມ ບ້ານຮາມໄຕ້ ຈື່ງປະສິບຜົນສໍາເລັດ?

- ອີງຕາມຈໍານວນເງີນໃນກອງທືນ ໃນເບື້ອງຕົ້ນມີ 20 ລ້ານກີບ ແລະ ສາມາດເພີ່ມຂື້ນເຖີງ 50 ລ້ານກີບ ໃນປະຈຸບັນ.
- ການບໍລິຫານງານຂອງຫົວໜ້າກຸ່ມ ທີ່ເຂັ້ມງວດ ແລະ ເປັນທໍາ. ພ້ອມດຽວກັນນັ້ນ, ການເອົາໃຈໃສ່ຂອງສະມາຊິກ ໃນການຝາກເງີນ ແລະ ສົ່ງທືນຄືນເປັນປະຈໍາ .
- ກຸ່ມຕໍ່າຫຼກ ໄດ້ຮັບການສະໜັບສະໜູນຈາກກຸ່ມສິນເຊື່ອ ໂດຍອີງໃສ່ກົດຈະກໍາພື້ນຖານ ທີ່ເຄີຍປະຕິບັດຜ່ານມາພາຍໃນບ້ານ.
- ໃນຄູະນະທີ່ໂຄງສິ້ນສຸດແລ້ວ ແຕ່ພວກເຂົາກໍ່ຍັງສາມາດດໍາເນີນງານໄປໄດ້ດ້ວຍຕົວຂອງເຂົາເອງ. ອີກປັດໃຈໜຶ່ງ ກໍ່ຍອນຫົວໜ້າກຸ່ມເອົາໃຈໃນການແຈ້ງບັນຊີລາຍຮັບລາຍຈ່າຍ. ດັ່ງນັ້ນ, ສະມາຊິກມີຄວາມເຊື່ອໝັ້ນ.

## ເປັນຫັຍງການດໍາເນີນງານ ບ້ານກໍ່ໄຣຈື່ງບໍ່ສາມາດ ດໍາເນີນໄປໄດ້ດີ?

- ຫົວໜ້າກຸ່ມບໍ່ໄດລາຍງານກ່ງວກັບສິນເຊື່ອ ແລະ ບັນຊີອອມຊັບ, ບໍ່ໄດ້ມີການແຈ້ງຕໍ່ກັບສະມາຊິກທັງໝົດ.ບໍ່ໂປ່ງໃສ.
- ບໍ່ໄດ້ມີການແຈ້ງການກ່ງວກັບການຄັດເລືອກຫົວໜ້າກຸ່ມ,ອໍານາດການປົກຄອງບ້ານ ແມ່ນເລືອກເອົາເອງ.ບໍ່ມີການເລືອກ. ປະຊາຊົນສ່ວນຫລາຍ ແມ່ນບໍ່ມີຄວາມສະບາຍໃຈ ແລະ ບໍ່ມີຄວາມເຊື່ອໝັ້ນ ໃນຕົວຂອງຫົວ ໜ້າ ກຸມ .
- ສະມາຊິກຈໍານວນໜຶ່ງໄດ້ກູ້ຢືມເງີນຈາກກຸ່ມສິນເຊື່ອ ແລະ ບໍ່ໄດ້ສົ່ງຄືນລວມທັງຄະນະກໍາມະການກຸມ.ໂດຍບໍ່ຖືກົດລະບຽບຫັຍງ
- ສະມາຊິກແມ່ນບໍ່ໄດ້ຮູ້ຫັຍງທີ່ແນ່ນອນກ່ງວກັບໜ້າທີ່ຮັບຜິດຊອບ,ບໍ່ເຂົ້າແມ່ນບໍ່ໄດ້ຮັບການສະໜັບສະໜູນຫັຍງຈາກກຸມ ? (ພວກເຂົາຮູ້ພຽງແຕ່ວາ ຕ້ອງອອມເງນໃຫ້ຫລາຍ)ບໍ່ມີຄວາມຕັ້ງໃຈ

1

# ຜົນທີ່ໄດ້ຈາກການສຶກສາ

- ການສ້າງຕັ້ງກຸ່ມໃດໜຶ່ງ ຕ້ອງໄດ້ອາໃສກິດຈະກຳພື້ນຖານ ພາຍໃນທ້ອງຖິ່ນ ທີ່ເຂົາເຈົ້າມີຄວາມຊຳນານ ຊຶ່ງຈະເປັນໂອກາດທີ່ດີທີ່ຈະເຮັດໃຫ້ກຸ່ມເຂັ້ມແຂງ.
- ຜູ້ ນຳກຸ່ມ ຕ້ອງເປັນຄົນທີ່ມີຄວາມສົນໃຈ ໃນກິດຈະກຳທີ່ດຳເນີນຢູ່
- ຜູ້ນຳກຸ່ມ ເປັນປັດໃຈຫຼັກທີ່ສະໜັບສະໜູນໃຫ້ສະມາຊິກເຂົ້າຮ່ວມກິດຈະກຳ ພາຍໃນກຸ່ມ.



2

# ຜົນທີ່ໄດ້ຈາກການສຶກສາ...

- ຖານະຄວາມຮັ່ງມີ ແລະ ສະຖານະພາບ ຂອງຄົນໃນຊຸມ ຊົນເປັນປັດໃຈໜຶ່ງໃນການເຂົ້າເຖິງສິນເຊື່ອ.
- ຄອບຄົວທຸກຍາກຫຼາຍຄອບຄົວ ຍັງລັງເລ ແລະ ບໍ່ກ້າຮັບ ເອົາສິນເຊື່ອ ເພາະເຂົາເຈົ້າຢ້ານບໍ່ມີຄວາມສາມາດທີ່ ຈະໃຊ້ເງິນຄືນໃຫ້ກຸ່ມ.
- ການສື່ສານທີ່ດີ ລະຫວ່າງຫົວໜ້າກຸ່ມ ແລະ ສະມາຊິກ ເປັນອີກປັດໃຈ ທີ່ເຮັດໃຫ້ກຸ່ມປະສົບຜົນສຳເລັດ
- ສະພາບຂອງຜູ້ນຳກຸ່ມ ມີຜົນຕໍ່ການດຳເນີນງານພາຍໃນ ກຸ່ມ.

## ຄວາມຮັບຮູ້ຂອງສະມາຊິກ

- ກອງທຶນໝູນວຽນ ແຈກຢາຍສິນເຊື່ອໃຫ້ສະມາຊິກ ໄປທຳການຜະລິດ ເພື່ອສ້າງລາຍຮັບໃຫ້ຄອບຄົວ ແຕ່ກໍ່ຍັງມີສະມາຊິກຈຳນວນໜຶ່ງ ທີ່ບໍ່ປະຕິບັດຕາມກົດທີ່ທາງກຸ່ມວາງອອກ ໂດຍການນຳສິນເຊື່ອດັ່ງ ກ່າວໄປຊື້ເຄື່ອງເຮືອນ ແລະ ອຸປະກອນອື່ນໆທີ່ອຳນວຍຄວາມສະດວກ ໃຫ້ຄອບຄົວ
- ຄວາມຮູ້ໃນການດຳເນີນງານ ຂອງສະມາຊິກພາຍໃນກຸ່ມຍັງຕ່ຳ. ຊຶ່ງສະມາຊິກຫຼາຍຄົນ ບໍ່ຮູ້ກ່ຽວກັບໜ້າທີ່ຮັບຜິດຊອບຂອງຕົນເອງພາຍໃນກຸ່ມ ວ່າເຮັດຫຍັງແທ້ ແລະ ເຂົາມີໜ້າທີ່ປະກອບສ່ວນຫຍັງແດ່ພາຍ ໃນກຸ່ມ?
- ການໄດ້ຮັບສິນເຊື່ອ ເປັນປັດໃຈທີ່ເຮັດໃຫ້ຄົນຢາກເຂົ້າເປັນສະມາຊິກ.
- ສະມາຊິກມີຄວາມກະຕືລືລົ້ນທີ່ຈະໄດ້ຮັບສິນເຊື່ອ ແຕ່ບໍ່ໄດ້ພິຈາລະນາວ່າຈະເອົາສິນເຊື່ອດັ່ງກ່າວນັ້ນ ປະຕິບັດກິດຈະກຳໃດທີ່ເໝາະສົມ.

## ຄວາມຮັບຮູ້ຂອງຫົວໜ້າກຸ່ມ

- ການຄັດເລືອກຫົວໜ້າກຸ່ມ ທີ່ຈັດຂຶ້ນແບບບໍ່ເປັນທາງການ. ດັ່ງນັ້ນ, ເຮັດໃຫ້ສະມາຊິກຫຼາຍຄົນ ບໍ່ພໍໃຈ ແລະ ບໍ່ເຊື່ອໝັ້ນ ໃນການດຳເນີນງານຂອງຫົວໜ້າກຸ່ມ.
- ປົກກະຕິການຄັດເລືອກຫົວໜ້າກຸ່ມ ແມ່ນຈະເລືອກເອົາບຸກຄົນ ທີ່ມີຄວາມຮູ້ຄວາມສາມາດ, ມີປະສົບການ ແລະ ມີຕຳແໜ່ງໃນພາຍໃນບ້ານ. ແຕ່ບາງຄັ້ງ, ເຂົາເຈົ້າເຫຼົ່ານັ້ນ ກໍ່ມີ ຫຼາຍກິດຈະກຳ ແລະ ໜ້າທີ່ຮັບຜິດຊອບຢູ່ແລ້ວ ເຮັດໃຫ້ເຂົາ ເຈົ້າບໍ່ມີເວລາ ໃນໄກ້ຊິດຕິດແທດກັບສະມາຊິກ.
- ການລາຍງານກິດຈະກຳຕ່າງໆພາຍໃນກຸ່ມ ຄວນຈະມີການ ແຈ້ງໃຫ້ສະມາຊິກທຸກຄົນພາຍໃນກຸ່ມຮັບຮູ້ນຳ ແລະ ປະຕິບັດ ແບບໂປ່ງໃສ (ເປັນຕົ້ນແມ່ນການລາຍງານຈຳນວນເງິນຝາກ ແລະ ເງິນຖອນ).

## ຂໍ້ສະເໜີແນະ

- ກົນໄກການດໍາເນີນງານທີ່ມີການຂັດແຍ່ງ ຄວນຈະພັດທະນາ ໃນຂັ້ນເມືອງ ຫຼື ກຸ່ມບ້ານ. ເພື່ອເປັນການຫຼີກລ່ຽງຂໍ້ຂັດແຍ່ງທີ່ ນ້ອຍ ອັນທີ່ຈະກາຍເປັນບັນຫາອັນໃຫຍ່ຫຼວງພາຍໃນຊຸມຊົນ.
- ບັນຫາຈາກກໍລະນີສຶກສາທັງໝົດນີ້ ບໍ່ໄດ້ເກີດມາຈາດເຕັກນິກ ແຕ່ມາຈາກບັນຫາທາງສັງຄົມ
- ຄວາມອາດສາມາດຂອງຫົວໜ້າກຸ່ມ ແມ່ນອີງຕາມບ້ານດັ່ງກ່າວ, ກຸ່ມບ້ານ ຫລື ໃນລະດັບເມືອງມອບໝາຍໃຫ້, ໃນເມື່ອຫົວໜ້າ ກຸ່ມເຮັດຜິດຈໍາເປັນຕ້ອງໄດ້ລົງໂທດພຶດຕິກໍາທີ່ບໍ່ດີທີ່ບໍ່ສາມາດ ລີກລ້ຽງໄດ້. ໂດຍບໍ່ສາງຜົນກະທົບຕໍ່ສະມາຊິກຄົນອື່ນພາຍໃນກຸ່ມ

## ຂໍຂອບໃຈ

